ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ

ເລກທີ:0896/ອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ:11 ພຶດສະພາ 2015

# ຄໍາສັ່ງ

## ຂອງລັດຖະມົນຕີວ່າການ ກະຊວງອຸດສາຫະກໍາ ແລະ ການຄ້າ

## ກ່ຽວກັບການຄວບຄຸມລາຄາຜະລິດຕະພັນຢາສູບ ດ້ວຍການກໍານົດລາຄາຂາຍຍ່ອຍຕໍ່າສຸດ.

ເຖິງ: ທ່ານຫົວໜ້າພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.

- ອີງຕາມດໍາລັດເລກທີ 522/ນຍ, ລົງວັນທີ 23/12/2011, ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງອຸດສາຫະກໍາ ແລະ ການຄ້າ.
- ອີງຕາມດໍາລັດເລກທີ 474/ນຍ, ລົງວັນທີ 18/11/2010, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ.
- ອີງຕາມແຈ້ງການຂອງຫ້ອງວ່າການລັດຖະບານເລກທີ 346/ຫລບ.ກສສ, ລົງວັນທີ 26/02/2015 ກ່ຽວກັບການຄວບຄຸມລາຄາຢາສູບດ້ວຍມາດຕະການກໍານົດລາຄາຂາຍຍ່ອຍຕໍ່າສຸດ.

ເພື່ອເປັນການປົກປ້ອງສຸຂະພາບຂອງພົນລະເມືອງທີ່ໄດ້ຮັບຜົນກະທົບຈາກການຊົມໃຊ້ຜະລິດຕະພັນຢາສູບ ແລະ ການໄດ້ຮັບຄວັນຢາສູບ, ແນໃສ່ຫຼຸດຜ່ອນການເຂົ້າເຖິງຢາສູບຂອງຊາວໜຸ່ມເຍົາວະຊົນ, ຫຼຸດຜ່ອນການຄ້າຂາຍຢາສູບນອກລະບົບ, ຮັກສາສະເຖຍລະພາບທາງດ້ານລາຄາ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ່ດໍາເນີນທຸລະກິດທີ່ຖືກຕ້ອງ, ຜູ່ຊົມໃຊ້ ແລະ ຜົນປະໂຫຍດຂອງລັດ.

ລັດຖະມົນຕີວ່າການກະຊວງອຸດສາຫະກໍາ ແລະ ການຄ້າ ອອກຄໍາສັ່ງ :